# ວິທີການທີ່ຮັບຜິດຊອບຕໍ່ການສ້າງເຂື່ອນໄຟຟ້ານ້ຳຕົກ

*ທ່ານ ເຈຣະມີ ເບີຣດ, ຫົວໜ້າກອງເລຂາຄະນະກຳມະການແມ່ນ້ຳຂອງ*

ການປ່ຽນແປງອັນໃຫຍ່ຫລວງທາງດ້ານລາຄານ້ຳມັນ ແລະ ແກັສ ໃນປີທີ່ຜ່ານມາ ແລະ ການເຕີບໂຕທາງຫລັກຖານຂອງການປ່ຽນແປງທາງອາກາດຂອງໂລກໄດ້ກາຍເປັນຈຸດສົນໃຈໃນຄວາມຕ້ອງການແຫລ່ງພະລັງງານທີ່ຍືນຍົງຂອງພະລັງງານທີ່ສະອາດ.

ໃນອາຊີຕາເວັນອອກສຽງໃຕ້ ມີທ່າແຮງຂອງແຫລ່ງພະລັງງານອັນມະຫາສານ. ແມ່ນ້ຳຂອງທີ່ມີຄວາມຍາວປະມານ 4,800 ກິໂລແມັດ ໄຫລຜ່ານ ແຂວງຢຸນນານຂອງຈີນ, ປະເທດພະມ້າ ແລະ ບັນດາສະມາຊິກຄະນະກຳມາທິການແມ່ນ້ຳຂອງ ລາວ, ໄທ, ກຳປູເຈັຍ ແລະ ຫວຽດນາມ. ໃນກາງສັດຕະວັດທີ 20 ແມ່ນ້ຳຂອງ ແລະ ແມ່ນ້ຳສາຂາ ຖືກບົ່ງຊີ້ໃຫ້ເຫັນວ່າອາດເປັນແຫລ່ງຜະລິດພະລັງງານໄຟຟ້ານ້ຳຕົກໄດ້. ມາເຖິງປະຈຸບັນ, ພຽງແຕ່ 5% ຂອງທ່າແຮງດັ່ງກ່າວໄດ້ຖືກນຳມາພັດທະນາ.

ແຕ່ວ່າຈະຮັກສາຄວາມສົມດຸນຂອງທ່າແຮງໄຟຟ້າອັນມະຫາສານນີ້ກັບຄວາມຕ້ອງການເພື່ອປົກປັກຮັກສາຜົນປະໂຫຍດອື່ນໆ ຂອງແມ່ນ້ຳໄວ້ໄດ້ແນວໃດ? ແມ່ນ້ຳຂອງແມ່ນຊັບພະຍາກອນທຳມະຊາດທີ່ບຳລຸງລ້ຽງຄວາມສີວິໄລອັນເປັນປະຫວັດສາດຂອງມວນມະນຸດ. ມັນແມ່ນທີ່ຢູ່ອາໃສຂອງປາ ຈຳນວນ 1,300 ຊະນິດ ແລະ ແມ່ນການຮັກສາອຸດສາຫະກຳການປະມົງແບບຍືນຍົງ ຊຶ່ງມີມູນຄ່າຢ່າງນ້ອຍ 2 ພັນລ້ານໂດລາສະຫະລັດຕໍ່ປີ. ປາ ແລະ ນ້ຳຊີນລະປະທານ ທີ່ໄດ້ມາຈາກສະພາວະນ້ຳຖ້ວມປະຈຳປີ ໄດ້ ສະໜອງອາຫານແກ່ປະຊາຊົນຫລາຍກ່ວາ 60 ລ້ານຄົນທຸກໆປີ.

ທີ່ກ່າວມານີ້ ແມ່ນບັນຫາ ທີ່ບັນດາຜູ້ແທນຈຳນວນ 200 ທ່ານ ຈະປຶກສາຫາລືກັນ ທີ່ວຽງຈັນໃນອາທິດນີ້ ຊຶ່ງຄະນະກຳມາທິການແມ່ນ້ຳຂອງສາກົນ ຂໍໃຫ້ຜູ້ເຂົ້າຮ່ວມທີ່ມາຈາກບັນດາປະເທດພາຄີ ມີຄຳເຫັນຕໍ່ກັບພາລະບົດບາດຂອງຄະນະກຳມາທິການແມ່ນ້ຳຂອງໃນການພັດທະນາໄຟຟ້ານ້ຳຕົກໃນຂົງເຂດ. ເປັນທີ່ຮັບຮູ້ຢ່າງກ້ວາງຂວາງວ່າບັນຫາຕ່າງໆທີ່ປິ່ນອ້ອມເຂື່ອນ ແລະ ການພັດທະນາໄຟຟ້ານ້ຳຕົກແມ່ນເປັນສິ່ງທີ່ລະອຽດອ່ອນ ແຕ່ນັ້ນກໍຄືເຫດຜົນວ່າເປັນຫຍັງຜູ້ເຂົ້າຮ່ວມປະຊຸມຄວນຈະປຶກສາຫາລືກັນໃນກອງປະຊຸມແບບເປີດເຜີຍ ແລະ ມີວັດຖຸປະສົງທີ່ແນ່ນອນຄັ້ງນີ້.

ແປດປີທີ່ຜ່ານມາ ຄະນະກຳມາທິການເຂື່ອນໂລກໄດ້ສະເໜີວິທີການກ່ຽວກັບສິດທິ ແລະ ຄວາມສ່ຽງໃນການວາງແຜນສ້າງເຂື່ອນໂດຍພິຈາລະນາເອົາສິດຂອງຜູ້ມີສ່ວນຮ່ວມ ແລະ ມີວັດຖຸປະສົງເພື່ອແກ້ໄຂ ແລະ ຫລຸດຜ່ອນຄວາມສ່ຽງທີ່ແຕ່ລະກຸ່ມຄົນຈະປະເຊີນ. ພວກເຮົາຄວນຈະເພີ່ມອົງປະກອບຂອງຄວາມຮັບຜິດຊອບໃສ່ກັບປະເດັນທີ່ກ່າວມາ ກໍຄືຄວາມຮັບຜິດຊອບຂອງບັນດາປະເທດ. ຄະນະກຳມາທິການແມ່ນ້ຳຂອງ ຈະຕ້ອງສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດແບບຍືນຍົງ ແລະ ຫລຸດຜ່ອນຄວາມທຸກຍາກ. ລັດຖະບານ ແລະ ປະຊາຊົນທີ່ອາໃສຢູ່ໃນຂົງເຂດອ່າງແມ່ນ້ຳຂອງ ສາມາດນຳໃຊ້ການ

ພິຈາລະນາທີ່ກ່າວມາ ເພື່ອຕັດສິນໃຈໃນເວລາທີ່ສຳຄັນນີ້ ໃນເວລາທີ່ເຂື່ອນປະມານ 10 ແຫ່ງ ກຳລັງຖືກວາງແຜນກໍ່ສ້າງຕາມລຳແມ່ນ້ຳຂອງຕອນລຸ່ມ.

ພວກເຮົາຈະເຮັດໄດ້ຄືແນວໃດ? ໃນລະດັບລະຫວ່າງປະເທດ, ມັນມີຄວາມຈຳເປັນທີ່ຈະນຳໃຊ້ວິທີການໃນລະດັບຂົງເຂດໃນການປະເມີນທຸກໂຄງການພັດທະນາເຂື່ອນໄຟຟ້ານ້ຳຕົກທີ່ໄດ້ນຳສະເໜີ. ໃນນີ້ແມ່ນຮວມທັງການສົ່ງເສີມຄວາມເຂົ້າໃຈທີ່ຊັດເຈນຕໍ່ບັນຫາການສ້າງເຂື່ອນໃນປະເທດໜຶ່ງ ຊຶ່ງອາດມີຄວາມສາມາດມີຜົນກະທົບຕໍ່ປະເທດອື່ນ ແລະ ປະຊາຊົນຜູ້ທີ່ໃຊ້ນ້ຳ. ບັນຫາໃນທີ່ນີ້ແມ່ນໃຜຈະໄດ້ຮັບຜົນປະໂຫຍດ ແລະ ໃຜຈະເປັນຜູ້ເສັຍປະໂຫຍດ ທີ່ເກີດຈາກຜົນກະທົບຂອງການພັດທະນາແຕ່ລະໂຄງການ?.

ຄະນະກຳມາທິການແມ່ນ້ຳຂອງ ໄດ້ພັດທະນາຕົວແບບຈຳລອງ ສຳລັບການຮ່ວມມືໃນຂົງເຂດ ອີງໃສ່ສິ່ງທີ່ເໝາະສົມສຳລັບຂົງເຂດອ່າງແມ່ນ້ຳຂອງທັງໝົດ. ຮວມເຂົ້າກັນກັບສິ່ງນີ້ ແມ່ນວິທີການທົ່ວອ່າງໃນການຕັດສິນໃຈ ຊຶ່ງຄວາມຕ້ອງການທາງດ້ານການພັດທະນາໂດຍລວມຂອງປະເທດພາຄີແມ່ນ້ຳຂອງຖືກພິຈານາເມື່ອໃດກໍຕາມທີ່ມີການຕັດສິນໃຈທາງດ້ານການພັດທະນາໄຟຟ້ານ້ຳຕົກ ໂດຍພິຈາລະນາເອົາວຽກງານການປະມົງ, ຊົນລະປະທານ, ການຄຸ້ມຄອງສິ່ງແວດລ້ອມ, ການເດີນເຮືອ, ການຄຸ້ມຄອງອຸທົກກະໄພ ແລະ ທ່ອງທ່ຽວໄປພ້ອມໆກັນ.

ມີຄວາມຈຳເປັນໃຫ້ມີຄຳຕອບຕໍ່ຜົນກະທົບຂອງການຕັດສິນໃຈໃນແຕ່ລະຄັ້ງ. ເຂື່ອນຈະມີຜົນກະທົບແນວໃດຕໍ່ການເຄື່ອນຍ້າຍຂອງປາທີ່ມີຄວາມສຳຄັນຕໍ່ປະຊາຊົນໃນເຂດຊົນນະບົດ? ມີຜົນປະໂຫຍດຫຍັງແດ່ຈາກການກໍ່ສ້າງເຂື່ອນທີ່ຕັ້ງຢູ່ໜຶ່ງໃນບັນດາແມ່ນ້ຳສາຂາຂອງແມ່ນ້ຳຂອງ? ຈະສາມາດຄຸ້ມຄອງອຸທົກກະໄພໃຫ້ມີປະສິດທິພາບດີກ່ວາເກົ່າ ຜ່ານການຄວບຄຸມການໄຫລຂອງນ້ຳໄດ້ບໍ່? ການຕັດສິນໃຈທັງໝົດ ແລະ ບັນດາຄຳຖາມຕ່າງໆສາມາດຕອບ ແລະ ແກ້ໄຂໄດ້ໂດຍວິທີການແບບປະສົມປະສານ.

ຄວາມຮູ້ໃນລະດັບຂົງເຂດ ແລະ ໃນລະດັບອ່າງແມ່ນ້ຳ ແມ່ນມີຄວາມສຳຄັນຫລາຍ. ດັ່ງນັ້ນ, ຄະນະກຳມາທິການແມ່ນ້ຳຂອງມີຄວາມຊຳນິຊຳນານ, ມີຖານຄວາມຮູ້ທີ່ກ້ວາງຂວາງ ແລະ ຕົວແບບຄະນິດສາດ ແລະ ເຄື່ອງມືໃນການວາງແຜນທີ່ສາມາດນຳໃຊ້ເຂົ້າໃນການປະເມີນສະພາບການປ່ຽນແປງໃນການພັດທະນາ. ການສະໜອງຂໍ້ມູນຂ່າວສານເຫລົ່ານີ້ໃຫ້ຜູ້ທີ່ຈະຕັດສິນໃຈຈະແມ່ນບູລິມະສິດ.

ດ້ວຍການລົງທຶນເຂົ້າໃນການພັດທະນາໄຟຟ້ານ້ຳຕົກໃນປັດຈຸບັນ ແມ່ນມາຈາກພາກເອກະຊົນ ແທນທີ່ຈະແມ່ນອົງການຈັດຕັ້ງສາກົນ ຂັ້ນຕອນການວາງແຜນສຳລັບການສ້າງເຂື່ອນ ແມ່ນຈະສັ້ນລົງກ່ວາເກົ່າ. ເພາະສະນັ້ນ, ການກຳນົດມາດຖານຂອງການວາງແຜນ ເພື່ອຮັບປະກັນວ່າບັນຫາທາງດ້ານສັງຄົມ ແລະ ສິ່ງແວດລ້ອມຈະໄດ້ຮັບການແກ້ໄຂ ແລະ ຄວາມສ່ຽງຕ່າງໆ ແລະ ຄວາມຮັບຜິດຊອບ ຈະຖືກກຳນົດໃຫ້ຊັດເຈນ. ທີ່ກ່າວມາທັງໝົດນີ້ແມ່ນສອດຄ່ອງກັບສັນຍາແມ່ນ້ຳຂອງປີ 1995 ຊຶ່ງໄດ້ເຊັນໂດຍສີ່ປະເທດສະມາຊິກຄະນະກຳມາທິການແມ່ນ້ຳຂອງ. ຄະນະກຳມາທິການແມ່ນ້ຳຂອງແມ່ນມີຖານະທີ່ເໝາະສົມໃນການສົ່ງເສີມການສົນທະນາກັນ ລະຫວ່າງຄູ່ຮ່ວມງານໃນຂະບວນການພັດທະນາ ແລະ ການລົງທຶນ

ເຂົ້າໃນໄຟຟ້ານ້ຳຕົກ. ແຕ່ລະບົດສະເຫນີໂຄງການສາມາດພິຈາລະນາໃນກອບຂອງການປະສານງານທົ່ວອ່າງເປັນຫລັກ.

ມັນແມ່ນຄວາມຮັບຜິດຊອບຂອງພວກເຮົາທີ່ຈະນຳໃຊ້ມຸມມອງໃນລະດັບຂົງເຂດແມ່ນ້ຳຂອງ ເພື່ອຮັບປະກັນວ່າການຕັດສິນໃຈຈະພາໄປສູ່ຜົນໄດ້ຮັບທີ່ສະທ້ອນເຖິງຜົນປະໂຫຍດຂອງຫມົດທຸກຄົນ ແລະສະທ້ອນເຖິງວິໄສທັດຂອງຄະນະກຳມາທິການແມ່ນ້ຳຂອງໃນອະນາຄົດຄື:  ເປັນອ່າງແມ່ນ້ຳຂອງທີ່ມີເສດຖະກິດຮຸ່ງເຮືອງສີວິໄລ, ສັງຄົມຍຸດຕິທຳ ແລະ ມີສິ່ງແວດລ້ອມທີ່ດີ.